# ເງິນພາສີທີ່ໄດ້ຄືນ ແລະ ການຢືມລ່ວງໜ້າ— ຢ່າ ໃຫ້ເງິນທີ່ທ່ານຄວນຈະໄດ້ນັ້ນເສັຽໄປຊື່ໆ

**TAX REFUND LOANS – DON’T GIVE AWAY YOUR REFUND**

ພະນັກງານທີ່ເຮັດ Income Tax (ພາສາລາວ- ແມ່ນການໄລ່ພາສີຂອງລາຍໄດ້ປະຈຳປີ) ໃຫ້ຄົນນັ້ນ ຈະບອກວິທີໃຫ້ທ່ານຖ້າຢາກໄດ້ເງິນຄືນໄວ. ວິທີນີ້ເອີ້ນວ່າ “Rapid Refund” ຫຼື “Refund Anticipation Loan”. ໝາຍເຖິງການ <u>ເອົາເງິນໃຫ້ທ່ານຢືມລ່ວງໜ້າ</u> ແທນທີ່ຈະຖ້າເງິນ(Refund)ຈາກລັດຖະບານ. ແລະທ່ານຈະໄດ້ເງິນພາຍໃນສອງຫາສາມວັນທັນທີ. ແຕ່ວາກ່ອນທ່ານຈະຢືມເງິນນີ້, ທ່ານຄວນຈະຮູ້ຜົນເສັຽມີຢ່າງໃດແດ່ະ

ການເຮັດ Income Tax ນີ້ຈະບໍ່ມີຂໍ້ຜູກມັດແລະເຮົາບໍ່ຈຳເປັນທີ່ຈະຕ້ອງຢືມເງິນອອກມາກ່ອນ. ແລະນອກຈາກນີ້ ຍັງມີອົງການທີ່ເຮັດ Income Tax ໃຫ້ທ່ານຟຣີໂດຍບໍ່ຕ້ອງເສັຽເງິນ.

ເງິນທີ່ຢືມອອກມາກ່ອນນັ້ນ ທ່ານຍັງຈະຕ້ອງໄດ້ຈ່າຍດອກເບັ້ຽສູງ ແລະ ຄ່າທຳນຽມອີກ.
ຕົວຢ່າງຂ້າງລຸ່ມນີ້ແມ່ນການຄິດໄລ່ຄ່າທຳນຽມ 3 ຢ່າງທີ່ຫັກອອກຈາກເງິນຂອງທ່ານ ສົມມຸດວ່າ ທ່ານຢືມກ່ອນ $1,500 ແລະນີ້ແມ່ນການຢືມໄລຍະສັ້ນ -ພຽງ 2 ທິດະ

| | |
|---|---|
| ຄ່າທຳນຽມຢືມເງິນ | $75.00 |
| ຄ່າດອກເບັ້ຍໄລ່ຕາມ ຄເຣດິດ ຄາດ (21 %) | $26.25 |
| ຢືມເງິນຈາກໝູ່ | $ 0 |



ຖ້າຢືມຫຼາຍເທົ່າໃດ, ຄ່າທຳນຽມກໍຈະສູງຂື້ນອີກ!

ຖ້າທ່ານຢືມເງິນ, ຈຳນວນເງິນທີ່ໄດ້ຮັບສຸດທ້າຍນັ້ນຈະລຸດລົງ

| | |
|---|---|
| ເງິນພາສີທີ່ທ່ານຈະໄດ້ຄືນຈາກລັດຖະບານ | $ 1,500.00 |
| ຄ່າທຳນຽມ ທີ່ຈ້າງຄົນເຮັດອິນຄຳແທກສໃຫ້ | $ -100.00 |
| ຄ່າທຳນຽມໃນການຢືມ ແລະ ດອກເບັ້ຽ | $ - 75.00 |
| ເງິນຍັງເຫຼືອນັ້ນທ່ານຈະໄດ້ຮັບພຽງແຕ່ | $ 1,325.00 |

**ເປັນຫຍັງທ່ານຕ້ອງຈ່າຍຄ່າທຳນຽມ $75 ສຳລັບຢືມເງິນ, ແລະ $100 ຄ່າຈ້າງຄົນເຮັດ ອິນຄຳແທກສ ທັ້ງໆທີ່ທ່ານສາມາດເຮັດ Income Tax ຟຣີໄດ້ ໂດຍບໍ່ເສັຽເງິນ.**

ເງິນພາສີທີ່ທ່ານຈະໄດ້ຄືນຈາກລັດຖະບານນັ້ນ ສາມາດເອົາໄປຈ່າຍຄ່າໜີ້ອັນອື່ນໄດ້. ຖ້າທ່ານເປັນໜີ້ທະນາຄານ ຫຼື ອົງການອື່ນໆ, ທ່ານສາມາດເຊັນໜັງສືມອບສັນທະ ໃຫ້ພວກເຈົ້າໜີ້ (Creditors) ແລະເຂົາມີສິດເອົາເງິນນີ້ໄປໃຊ້ໜີ້ໃຫ້ທ່ານໄດ້. ຖ້າທ່ານເຊັນໃບມອບສິດໃຫ້ພວກເຈົ້າໜີ້, ທ່ານອາດຈະບໍ່ໄດ້ເງິນພາສີຄືນຈາກລັດຖະບານຈັກໜ້ອຍເລີຍ.

ພວກລັດຖະບານກາງຝ່າຍພາສີອາກອນ (IRS) ຈະກວດກາເງິນພາສີທີ່ສົ່ງຄືນໃຫ້ແຕ່ ລະຄອບຄົວຫຼືບຸກຄົນ.
ຖ້າຄອບຄົວທ່ານຖືກລັດຖະບານກວດເບິ່ງຈຳນວນເງິນພາສີທີ່ຈະໄດ້ຄືນ, ທາງລັດຖະບານຈະກັກເງິນຂອງທ່ານໄວ້ຊົ່ວຄາວ.

## ເຮົາຈະເຮັດແນວໃດ ທີ່ຈະໄດ້ເງິນພາສີຄືນທັງໝົດເລີຍ ແລະບໍ່ຕ້ອງຈ່າຍຄ່າທຳນຽມໃດໆ?

ທ່ານສາມາດເຮັດ Income Tax ຟຣີໂດຍບໍ່ຕ້ອງເສັຽເງິນນຳ ພວກອົງການ Volunteer Income Tax Assistance (VITA). ອົງການນີ້ ມີສາຂາຢູ່ຕາມຫຼາຍໆ ຕົວເມືອງ ຈະເປີດບໍລິການແລະຊ່ວຍໄລ່ພາສີຂອງລາຍໄດ້ປະຈຳປີໃຫ້ທ່ານຟຣີ. ຫ້ອງການ ບາງແຫ່ງຈະສົ່ງເອກກະສານດ່ວນໃຫ້ທ່ານໄປທາງຄອມພິວເຕີ້. ເພື່ອຢາກຮູ້ວ່າ ຫ້ອງການ VITA ຢູ່ໃສແດ່ ທ່ານຄວນໂທຫາ United Way ເບີ 211 ຫຼື(651) 297-3724 ຖ້າທ່ານອາສັຍຢູ່ໃນອົງເຂດເມືອງຝາແຝດ Twin Cities.

ທ່ານຄວນຈະໃຫ້ພວກ ລັດຖະບານກາງຝ່າຍພາສີອາກອນ (IRS) ສົ່ງເງິນເຂົ້າທະນາຄານ ຂອງທ່ານໂດຍຕົງເລີຍ. ຖ້າທ່ານສົ່ງເອກກະສານໄປທາງຄອມພິວເຕີ້, ເງິນນີ້ກໍຈະເຂົ້າໄປ account ຂອງທ່ານພາຍໃນ 2 ທິດ ຫຼື ຖ້າທ່ານສົ່ງໄປທາງໄປສະນີ ມັນຈະໃຊ້ເວລາ ປະມານ 4ທິດ. ທ່ານຈະໄດ້ຮັບເງິນພາສີຈາກລັດຖະບານຂອງລັດ (State) ໄວກວ່າຈາກພວກລັດຖະບານກາງ.

## ຕ້ອງເບິ່ງໃຫ້ແນ່ໃຈວ່າພະນັກງານເຮັດອີ່ນຄຳແທກສ ນັ້ນເຮັດວຽກຖືກຕາມກົດລະບຽບ

ບໍລິສັດຫຼືພະນັກງານທີ່ເຮັດອີນຄຳແທກສ ແລະ ທີ່ສາມາດ ເອົາເງິນໃຫ້ຄົນຢືມລ່ວງໜ້ານັ້ນ ຕ້ອງໄດ້ເຮັດຕາມກົດລະບຽບດັ່ງລຸ່ມນີ້:

- ຕ້ອງເຮັດອີນຄຳແທກສໃຫ້ແລ້ວທັນເວລາ,
- ຕ້ອງຂຽນຂໍ້ຄວາມໃສ່ຟອມໃຫ້ລຽບລ້ອຍ ກ່ອນທີ່ຈະໃຫ້ທ່ານເຊັນຊື່,
- ພະນັກງານທີ່ເຮັດອີນຄຳແທກສໃຫ້ທ່ານຈະຕ້ອງໄດ້ເຊັນຊື່ລົງໃນຟອມເໝືອນກັນ,
- ຕ້ອງກ໊ອບປີ້ເອກກະສານທັງໝົດໃຫ້ທ່ານໄວ້ໜຶ່ງຊຸດ,
- ຕ້ອງເກັບກ໊ອບປີ້ເອກກະສານຂອງທ່ານໄວ້ຈົນເຖິງ 4 ປີ,
- ເອກກະສານແລະຂໍ້ມູນກ່ຽວຂ້ອງກັບທ່ານ ເຂົາຕ້ອງເກັບໄວ້ຢ່າງປິດລັບ,
- ເຂົາຕ້ອງຊື່ສັດໃນໜ້າທີ່ ແລະ ເອົາຄ່າທຳນຽມທີ່ຖືກຕ້ອງ,
- ຕ້ອງໄດ້ເຮັດອີນຄຳແທກສໃຫ້ທ່ານເຖິງແມ້ວ່າທ່ານຈະບໍ່ຢືມເງິນອອກມາກ່ອນ,
- ໄລ່ເອົາໄດ້ແຕ່ຈຳນວນເງິນທີ່ເຮົາມີສິດຈະໄດ້ ແລະລາຍຈ່າຍຕ່າງໆທີ່ເອົາມາລົບອອກຕ້ອງຖືກຕ້ອງແລະເໝາະສົມ
- ຕ້ອງເອົາເອກກະສານ (W-2) ສົ່ງຄືນທ່ານເວລາທ່ານຖາມເອົາ; ແລະ
- ຄ່າທຳນຽມແມ່ນບໍ່ຂຶ້ນກັບຈຳເງິນທີ່ທ່ານຈະໄດ້ ຈະເປັນລາຄາຂາດຕົວ.



ບໍລິສັດຫຼືບຸກຄົນໃດກໍຕາມ ທີ່ເຮັດອີ່ນຄຳແທກສໃຫ້ທ່ານ ແລະ ທີ່ສາມາດໃຫ້ທ່ານຢືມເງິນລ່າງໜ້ານັ້ນ ເຂົາເຈົ້າຕ້ອງໄດ້ມອບໃບຕັກເຕືອນທີ່ບົ່ງບອກວ່າ ລະດັບດອກເບັ້ຽເທົ່າໃດ Annual Percentage Rate (APR), ຈຳນວນເງິນທີ່ທ່ານຈະໄດ້ຮັບຫຼັງຈາກລົບຄ່າທຳນຽມຕ່າງໆຍັງເຫຼືອເທົ່າໃດ, ແລະ ໄລຍະດົນປານໃດທີ່ຈະໄດ້ຮັບເງິນຈາກລັດຖະບານ. ບຸກຄົນທີ່ຕຽມເອກກະສານເຮັດ Income Tax ໃຫ້ທ່ານ ແລະຕົວທ່ານເອງ ຈະຕ້ອງໄດ້ເຊັນຊື່ລົງໃນໃບຕັກເຕືອນນີ້.

ພະນັກງານທີ່ເຮັດອີ່ນຄຳແທກສໃຫ້ທ່ານ ຕ້ອງໄດ້ມອບໃບບິນໃຫ້ທ່ານທີ່ສະແດງ ລາຍຈ່າຍຕ່າງໆເຊັ່ນ:

- ຄ່າທຳນຽມເຮັດອີ່ນຄຳແທກສ
- ຄ່າທຳນຽມທີ່ສົ່ງເອກກະສານໄປທາງຄອມພິວເຕີ້
- ຄ່າທຳນຽມທີ່ທ່ານຢືມເງິນ.

ຖ້າພະນັກງານຫຼືບໍລິສັດ ທີ່ຕຽມເອກກະສານເຮັດ ອີ່ນຄຳແທກສໃຫ້ທ່ານ ບໍ່ປະຕິບັດຕາມ ກົດລະບຽບດັ່ງກ່າວມາຂ້າງເທິງນີ້, ທ່ານມີສິດໄປຟ້ອງນຳກະຊວງການເງິນປະຈຳລັດໄດ້ Minnesota Department of Revenue. ທ່ານຍັງສາມາດຟ້ອງເຂົາຂື້ນສານໄດ້. ຖ້າທ່ານຊະນະຢູ່ສານພວກເຂົາຕ້ອງໄດ້ເສັຍຄ່າທະນາຍຄວາມໃຫ້ທ່ານ. ຖ້າທ່ານມີລາຍໄດ້ນ້ອຍ ບໍ່ມີເງິນຈ່າຍຄ່າທະນາຍຄວາມ, ຄວນໂທຫາ Legal Aid (612)334-5970 ຫຼື (800)292-4150.

---

***Minneapolis Legal Aid – CLE***
*MN Legal Services Coalition*
*2324 University Avenue W, Ste.101B*
*St. Paul, MN 55114*

***ຂໍ້ມູນຢູ່ໃນເຈັ້ຽຖ້າເກົ່າໜຶ່ງປີແລ້ວບໍ່ຄວນໃຊ້.***

*ຕິດຕໍ່ຫາພວກເຮົາເພື່ອຂໍ້ມູນໃໝ່ ເຈັ້ຍທີ່ມີ ລາຍການຕ່າງໆ ຫຼື ໂຄ່ງຮ່າງແບບອື່ນ.*

*ເຈັ້ຍນີ້ຈະບໍ່ຕອບຄຳຖາມໝົດທຸກຢ່າງ. ຄວນໄປປຶກສາທະນາຍຄວາມ.*